ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

-------------------

ແຂວງໄຊຍະບູລີ

ເລກທີ 980/ຈຂ.ຊບ

ໄຊຍະບູລີ,ວັນທີ 13.9... 2017

# ຂໍ້ຕົກລົງ
# ວ່າດ້ວຍ ການຄຸ້ມຄອງ ແລະ ນຳໃຊ້ທີ່ດິນກະສິກຳ

- ອີງຕາມ ກົດໝາຍວ່າດ້ວຍການປົກຄອງທ້ອງຖິ່ນແຫ່ງ ສປປ ລາວ (ສະບັບປັບປຸງ) ສະບັບເລກທີ 68 /ສພຊ, ລົງວັນທີ 14 ທັນວາ 2015 ພາກທີ III, ໝວດທີ IV, ມາດຕາ 20 ວ່າດ້ວຍສິດ ແລະ ໜ້າທີ່ຂອງ ເຈົ້າແຂວງ, ເຈົ້າຄອງນະຄອນຫຼວງ.
- ອີງຕາມ ກົດໝາຍວ່າດ້ວຍການສ້າງນິຕິກຳ ສະບັບເລກທີ 19 /ສພຊ, ລົງວັນທີ 12 ກໍລະກົດ 2012 ພາກທີ IV, ໝວດທີ V, ມາດຕາທີ 77 ການສ້າງຄຳສັ່ງ, ຂໍ້ຕົກລົງ ແລະ ຄຳແນະນຳຂອງເຈົ້າແຂວງ, ເຈົ້າຄອງນະຄອນ, ເຈົ້າເມືອງ ແລະ ຫົວໜ້າເທດສະບານ.
- ອີງຕາມ ຂໍ້ຕົກລົງຂອງລັດຖະມົນຕີວ່າການກະຊວງກະສິກຳ ແລະ ປ່າໄມ້ ສະບັບເລກທີ 2810 /ກປ, ລົງວັນທີ 13 ກໍລະກົດ 2016 ວ່າດ້ວຍການຮັບຮອງ ແລະ ນຳໃຊ້ປຶ້ມຄູ່ມືການຂຶ້ນສຳມະໂນທີ່ດິນກະສິກຳ, ອອກໃບຢັ້ງຢືນການນຳໃຊ້ ແລະ ພັດທະນາທີ່ດິນກະສິກຳລະດັບຄອບຄົວ.
- ອີງຕາມ ຄຳແນະນຳຂອງກົມຄຸ້ມຄອງ ແລະ ພັດທະນາທີ່ດິນກະສິກຳ ສະບັບເລກທີ 0843 /ຄພດກ, ລົງວັນທີ 15 ກໍລະກົດ 2016 ກ່ຽວກັບການຜັນຂະຫຍາຍຂໍ້ຕົກລົງ ຂອງລັດຖະມົນຕີກະຊວງກະສິກາ ແລະ ປ່າໄມ້ວ່າດ້ວຍການຮັບຮອງ ແລະ ນຳໃຊ້ປຶ້ມຄູ່ມືການຂຶ້ນສຳມະໂນທີ່ດິນກະສິກຳ, ອອກໃບຢັ້ງຢືນການນຳໃຊ້ ແລະ ພັດທະນາທີ່ດິນກະສິກຳລະດັບຄອບຄົວ.

**ເຈົ້າແຂວງໄຊຍະບູລີຕົກລົງ:**

## ໝວດທີ 1
## ບົດບັນຍັດທົ່ວໄປ

**ມາດຕາ 1. ຈຸດປະສົງ**

ຈຸດປະສົງຂອງຂໍ້ຕົກລົງ ວ່າດ້ວຍ ການຄຸ້ມຄອງ ແລະ ນຳໃຊ້ທີ່ດິນກະສິກຳ ແມ່ນ ເພື່ອກຳນົດຫຼັກການ ລະບຽບການ, ວິທີການ, ບາດກ້າວ ແລະ ຂັ້ນຕອນ ໃນການຄຸ້ມຄອງ ນຳໃຊ້ດິນກະສິກຳທຸກປະເພດ ທີ່ໄດ້ລະບຸໄວ້ໃນກົດໝາຍວ່າດ້ວຍທີ່ດິນ ເພື່ອໃຫ້ຜູ້ທີ່ໄດ້ຮັບສິດນຳໃຊ້ທີ່ດິນກະສິກຳ ໄດ້ນຳໃຊ້ດິນຖືກຕ້ອງຕາມກົດໝາຍ ແລະ ລະບຽບການ, ມີຄວາມຍຸຕິທຳ, ມີປະສິດທິຜົນສູງສຸດ ແລະ ມີຄວາມຍືນຍົງ.

ມາດຕາ 2. ອະທິບາຍຄຳສັບ.

1. **ທີ່ດິນກະສິກຳ:** ແມ່ນທີ່ດິນທີ່ໄດ້ກຳນົດໄວ້ເພື່ອນຳໃຊ້ເຂົ້າໃນການປູກຝັງ, ລ້ຽງສັດ ແລະ ການຄົ້ນຄ້ວາທົດລອງດ້ານກະສິກຳ ລວມທັງທີ່ດິນຊົນລະປະທານ.
2. **ການຄຸ້ມຄອງທີ່ດິນກະສິກຳ:** ແມ່ນການກຳນົດທີ່ດິນກະສິກຳປະເພດຕ່າງໆ, ຄົ້ນຄວ້າ ວາງລະບຽບການຄຸ້ມຄອງ, ປົກປັກຮັກສາ, ພັດທະນາ ແລະ ການນຳໃຊ້ທີ່ດິນປະເພດດັ່ງກ່າວ ໂດຍແມ່ນກະຊວງກະສິກຳ ແລະ ປ່າໄມ້ ເປັນເຈົ້າການຄຸ້ມຄອງໃນຂອບເຂດທົ່ວປະເທດ.
3. **ກຳມະສິດກ່ຽວກັບທີ່ດິນກະສິກຳ:** ແມ່ນສິດຄອບຄອງ ແລະ ນຳໃຊ້ທີ່ດິນກະສິກຳອັນຍາວນານ ແລະ ຖືກຕ້ອງຕາມລະບຽບກົດໝາຍ ເພື່ອຮັບໃຊ້ຜົນປະໂຫຍດຂອງຜູ້ນຳໃຊ້ທີ່ດິນກະສິກຳ.
4. **ແຮງງານຂອງຄອບຄົວ:** ແມ່ນແຮງງານຕົ້ນຕໍທີ່ມີອາຍຸແຕ່ 14 ປີ ເຖິງ 60 ປີ ທີ່ເຮັດອາຊີບຜະລິດກະສິກຳເປັນຫຼັກ.
5. **ສຳມະໂນທີ່ດິນກະສິກຳ:** ແມ່ນການລວບລວມເອົາ ຂໍ້ມູນທີ່ດິນກະສິກຳປະເພດຕ່າງໆ (ທີ່ຕັ້ງ, ຈຳນວນຕອນ, ເນື້ອທີ່) ເຂົ້າປື້ມບັນທຶກຂໍ້ມູນອັນດຽວກັນ.
6. **ໃບຢັ້ງຢືນການນຳໃຊ້ທີ່ດິນກະສິກຳ:** ແມ່ນເອກະສານຢັ້ງຢືນການນຳໃຊ້ທີ່ດິນ ທີ່ລັດມອບໃຫ້ຄອບຄົວ ເຮັດການຜະລິດ ເຊິ່ງມີສິດນຳໃຊ້ໄດ້ພາຍໃນເວລາສາມປີນັບແຕ່ວັນມອບໃຫ້.
7. **ໃບຢັ້ງຢືນການພັດທະນາທີ່ດິນກະສິກຳ:** ແມ່ນເອກະສານຢັ້ງຢືນການນຳໃຊ້ທີ່ດິນທີ່ລັດມອບໃຫ້ຄອບຄົວເຮັດການຜະລິດໃນ ສາມ ປີຜ່ານມາເຫັນວ່າຕອນດິນດັ່ງກ່າວໄດ້ນຳໃຊ້ຢ່າງຖືກຕ້ອງຕາມເປົ້າໝາຍ, ມີປະສິດທິຜົນ ແລະ ນຳໃຊ້ມີຄວາມຍືນຍົງ.

ມາດຕາ 3. ການກຳນົດຂອບເຂດສິດນຳໃຊ້ທີ່ດິນກະສິກຳ.

ລັດອານຸຍາດໃຫ້ບຸກຄົນ ແລະ ຄອບຄົວນຳໃຊ້ທີ່ດິນກະສິກຳ ຢ່າງຖືກຕ້ອງຕາມແຜນຈັດສັນ, ຕາມເປົ້າໝາຍ, ຍາວນານ ແລະ ມີປະສິດທິຜົນ ຕາມຈຳນວນເນື້ອທີ່ດັ່ງນີ້:

- ຜູ້ທີ່ປູກເຂົ້າ, ລ້ຽງສັດ ໃນຈຳນວນສູງສຸດ ບໍ່ເກີນ ໜຶ່ງເຮັກຕາ ຕໍ່ໜຶ່ງແຮງງານໃນຄອບຄົວ.
- ຜູ້ທີ່ເຮັດສວນປູກພືດອຸດສາຫະກຳ ແລະ ພືດລົ້ມລຸກ ໃນຈຳນວນສູງສຸດ ບໍ່ເກີນ ສາມເຮັກຕາ ຕໍ່ໜຶ່ງແຮງງານໃນຄອບຄົວ.
- ຜູ້ທີ່ເຮັດສວນປູກຕົ້ນໄມ້ໃຫ້ໝາກ ໃນຈຳນວນສູງສຸດ ບໍ່ເກີນ ສາມ ເຮັກຕາ ຕໍ່ໜຶ່ງແຮງງານໃນຄອບຄົວ.
- ຜູ້ທີ່ນຳໃຊ້ດິນປອກໂລ້ນ ຫຼື ປ່າຫຍ້າປະເພດຕ່າງໆ ຊຶ່ງຫັນມາປູກພືດ, ປູກຫຍ້າລ້ຽງສັດ ໃນຈຳນວນສູງສຸດບໍ່ເກີນສິບຫ້າເຮັກຕາ.
- ໃນການອານຸມັດ ເນື້ອທີ່ດິນກະສິກຳ ໃຫ້ບຸກຄົນນຳໃຊ້ນັ້ນ ລັດຈະພິຈາລະນາເປັນແຕ່ລະກໍລະນີ ໂດຍອີງໃສ່ລັກສະນະ, ຂະໜາດ, ຄວາມສາມາດຕົວຈິງໃນການຜະລິດ, ເງື່ອນໄຂ ແລະ ແຜນຈັດສັນດິນຂອງທ້ອງຖິ່ນ.
- ແຮງງານໜຶ່ງສາມາດ ໄດ້ຮັບສິດນຳໃຊ້ທີ່ດິນກະສິກຳ ຫຼາຍປະເພດຖ້າຜູ້ກ່ຽວຫາກມີເງື່ອນໄຂ ແລະ ຄວາມສາມາດຕົວຈິງໃນການຜະລິດ.
- ບຸກຄົນ ແລະ ນິຕິບຸກຄົນ ທີ່ຕ້ອງການນຳໃຊ້ທີ່ດິນກະສິກຳນຳຊາວກະສິກອນ ຫຼື ຜູ້ທີ່ໄດ້ຮັບສິດນຳໃຊ້ທີ່ດິນກະສິກຳ ຕ້ອງສະເໜີ ຫາທ່ານເຈົ້າເມືອງ ໂດຍຜ່ານຫ້ອງການກະສິກຳ ແລະ ປ່າໄມ້ເມືອງ ແລະ ອຳນາດການປົກຄອງບ້ານ.

ມາດຕາ 4. ຂອບເຂດການນຳໃຊ້ຂໍ້ຕົກລົງ

ຂອບເຂດການນຳໃຊ້ຂໍ້ຕົກລົງສະບັບນີ້ ນຳໃຊ້ໄດ້ສະເພາະການຄຸ້ມຄອງທີ່ດິນກະສິກຳຢູ່ໃນທົ່ວແຂວງໄຊຍະບູລີເທົ່ານັ້ນ.

## ໝວດທີ 2
## ການຄຸ້ມຄອງ ແລະ ພັດທະນາທີ່ດິນກະສິກຳ

**ມາດຕາ 5. ການຄຸ້ມຄອງ ທີ່ດິນກະສິກຳ.**

ທີ່ດິນກະສິກຳ ແມ່ນພະແນກກະສິກຳ ແລະ ປ່າໄມ້ແຂວງ ເຊິ່ງເປັນຕົວແທນຂອງອົງການປົກຄອງແຂວງເປັນຜູ້ຄຸ້ມຄອງ, ກຳນົດທີ່ດິນກະສິກຳ ປະເພດຕ່າງໆ, ປະສານສົມທົບກັບ ຂະແໜງການທີ່ກ່ຽວຂ້ອງ, ການຈັດຕັ້ງທ້ອງຖິ່ນ ລວມທັງ ສາຍຕັ້ງຂອງກະຊວງກະສິກຳ ແລະ ປ່າໄມ້ ເພື່ອຄົ້ນຄ້ວາ, ວາງແຜນ, ນຳໃຊ້, ປົກປັກຮັກສາ, ພັດທະນາທີ່ດິນ, ປະເມີນ ແລະ ກວດກາການນຳໃຊ້.

**ມາດຕາ 6. ການຂຶ້ນສຳມະໂນທີ່ດິນກະສິກຳ.**

ການຂຶ້ນສຳມະໂນທີ່ດິນກະສິກຳ ແມ່ນການເກັບສະຖິຕິສະເພາະຕອນດິນກະສິກຳ ປະເພດຕ່າງໆ ເຂົ້າໃນປື້ມສຳມະໂນທີ່ດິນກະສິກຳ ຂອງຫ້ອງການກະສິກຳ ແລະ ປ່າໄມ້ເມືອງ ເຊິ່ງເປັນຂໍ້ມູນພື້ນຖານໃນການອອກໃບຢັ້ງຢືນການນຳໃຊ້ທີ່ດິນກະສິກຳ ເພື່ອຄວາມສະດວກໃນການຄຸ້ມຄອງ ຕິດຕາມ, ກວດກາ ແລະ ຊຸກຍູ້ ໃນການນຳໃຊ້ເຂົ້າໃນການຜະລິດກະສິກຳ ແລະ ປ່ຽນແປງເປົ້າໝາຍການນຳໃຊ້ທີ່ດິນກະສິກຳ.

ການຂຶ້ນສຳມະໂນທີ່ດິນກະສິກຳ ໄດ້ດຳເນີນຫຼັງການກວດກາການນຳໃຊ້ຂອງຄອບຄົວ ເຊິ່ງເປົ້າໝາຍຕອນດິນທີ່ຈະຂຶ້ນສຳມະໂນທີ່ດິນກະສິກຳມີດັ່ງນີ້:

1. ຕອນດິນທີ່ນຳໃຊ້ຖືກຕ້ອງຕາມເປົ້າໝາຍທີ່ໄດ້ມອບຜ່ານມາ ແລະ ຕອນດິນດັ່ງກ່າວໄດ້ເຮັດການຜະລິດ ແລະ ພັດທະນາແລ້ວ.
2. ຕອນດິນທີ່ຈະສາມາດສືບຕໍ່ອອກໃບຢັ້ງຢືນສິດນຳໃຊ້ທີ່ດິນກະສິກຳໃນຂັ້ນຕໍ່ໄປ.

**ມາດຕາ 7. ການອອກໃບຢັ້ງຢືນການນຳໃຊ້ທີ່ດິນກະສິກຳ.**

ການອອກໃບຢັ້ງຢືນການນຳໃຊ້ທີ່ດິນກະສິກຳ ແມ່ນຫ້ອງການກະສິກຳ ແລະ ປ່າໄມ້ເມືອງ ເປັນຜູ້ອອກໃຫ້ຕາມເງື່ອນໄຂ ແລະ ລະບຽບການຂອງຂະແໜງການກະສິກຳ ແລະ ປ່າໄມ້ ກຳນົດເອົາໄວ້, ໃບຢັ້ງຢືນການນຳໃຊ້ທີ່ດິນກະສິກຳເປັນຂໍ້ມູນພື້ນຖານໃນການອອກໃບຢັ້ງຢືນການພັດທະນາທີ່ດິນກະສິກຳ.

ການອອກໃບຢັ້ງຢືນການນຳໃຊ້ທີ່ດິນກະສິກຳໄດ້ດຳເນີນພາຍຫຼັງການກວດກາການນຳໃຊ້ຂອງຄອບຄົວ ເຊິ່ງເປົ້າໝາຍຕອນດິນທີ່ຈະອອກໃບຢັ້ງຢືນການນຳໃຊ້ທີ່ດິນກະສິກຳມີດັ່ງນີ້:

- ຕອນດິນທີ່ບໍ່ນອນໃນເຂດຫວງຫ້າມຂອງສາມປະເພດປ່າ, ເຂດປ້ອງກັນແຫຼ່ງນ້ຳ ແລະ ເຂດຫວງຫ້າມອື່ນໆ.
- ການກຳນົດການນຳໃຊ້ດິນກະສິກຳຢູ່ເຂດຄ້ອຍຊັນສູງ ແມ່ນປະຕິບັດຕາມບົດແນະນຳຂອງກະຊວງກະສິກຳ ແລະ ປ່າໄມ້ ສະບັບເລກທີ 0822 /ກປ, ລົງວັນທີ 2 ສິງຫາ 1996 ລາຍລະອຽດດັ່ງລຸ່ມນີ້:

- ຄວາມຄ້ອຍຊັນແຕ່ 0-12% (0-10,8°) ເປັນດິນກະສິກຳ ສາມາດນຳໃຊ້ເຮັດນາ, ໜອງປາ, ທົ່ງຫຍ້າລ້ຽງສັດ, ປູກພືດອຸດສາຫະກຳ, ໄມ້ໃຫ້ໝາກ, ໄມ້ອຸດສາຫະກຳ ແລະ ລ້ຽງສັດຂະໜາດນ້ອຍ.
- ຄວາມຄ້ອຍຊັນແຕ່ 12-25% (10,8° – 22,5°) ສາມາດເຮັດນາຂັ້ນໄດ, ລ້ຽງສັດ, ປູກຕົ້ນໄມ້ໃຫ້ໝາກ, ປູກພືດເປັນສິນຄ້າແຕ່ຕ້ອງໃຊ້ມາດຕາການປົກປັກຮັກສາດິນໄປພ້ອມ.
- ຄວາມຄ້ອຍຊັນແຕ່ 25-36% (22,5° – 32,4°) ສາມາດປູກພືດໄຮ່, ລ້ຽງສັດ, ປູກໄມ້ໃຫ້ໝາກ, ປູກພືດເປັນສິນຄ້າລະບົບກະສິກຳ-ປ່າໄມ້ແຕ່ຕ້ອງມີມາດຕາການຕ້ານການເຊາະເຈື່ອນຂອງດິນ.
- ຄວາມຄ້ອຍຊັນແຕ່ 36-45% (32,4° – 40,5°) ສາມາດປູກພືດໄຮ່ ຖ້າມີຄວາມຈຳເປັນປູກໄມ້ໃຫ້ໝາກນຳໃຊ້ລະບົບກະສິກຳ-ປ່າໄມ້ແຕ່ຕ້ອງມີມາດຕາການຕ້ານການເຊາະເຈື່ອນຂອງດິນ.
- ດິນຄ້ອຍຊັນແຕ່45% (40,5° ) ຂື້ນໄປຮັກສາໃຫ້ມີປ່າໄມ້ເພື່ອປ້ອງກັນການເຊາະເຈື່ອນຂອງດິນ.

- ເນື້ອທີ່ຂອງຕອນດິນ ທີ່ບໍ່ເກີນແຮງງານຂອງຄອບຄົວທີ່ລະບຸໃນມາດຕາ 3 ຂອງຂໍ້ຕົກ ລົງສະບັບນີ້.
- ສຳລັບຕອນດິນທີ່ໄດ້ມາຈາກການຄອບຄອງ ເກີນແຮງງານທີ່ກຳນົດໄວ້ໃນ ມາດຕາ 3 ຂອງຂໍ້ຕົກລົງສະບັບນີ້ ໂດຍບໍ່ຮັບຮູ້ຈາກລັດ ຫຼື ບໍ່ມີທະບຽນທີ່ດິນຖາວອນ ແມ່ນໃຫ້ໂຈະອອກໃບຢັ້ງຢືນການນຳໃຊ້ທີ່ດິນກະສິກຳ ເພື່ອພິຈາລະນາຕາມລະບຽບການ.

**ມາດຕາ 8. ການອອກໃບຢັ້ງຢືນການພັດທະນາທີ່ດິນກະສິກຳ.**

ໃບຢັ້ງຢືນການພັດທະນາທີ່ດິນກະສິກຳ ແມ່ນພະແນກກະສິກຳ ແລະ ປ່າໄມ້ແຂວງ ເປັນຜູ້ອອກໃຫ້ຕາມເງື່ອນໄຂ ແລະ ລະບຽບການຂອງຂະແໜງການກະສິກຳ ແລະ ປ່າໄມ້ກຳນົດໄວ້, ໃບຢັ້ງຢືນການພັດທະນາທີ່ດິນກະສິກຳໄດ້ປະຕິບັດຫຼັງການອອກໃບຢັ້ງຢືນການນຳໃຊ້ທີ່ດິນກະສິກຳ ສາມປີ ຖ້າຕອນດິນດັ່ງກ່າວໄດ້ນຳໃຊ້ຖືກຕ້ອງຕາມເປົ້າໝາຍ, ທີ່ດິນມີການພັດທະນາ, ການນຳໃຊ້ດິນມີຄວາມຍືນຍົງ; ການອອກໃບຢັ້ງຢືນການພັດທະນາທີ່ດິນກະສິກຳ ໄດ້ດຳເນີນຫຼັງການກວດກາການນຳໃຊ້ຂອງຄອບຄົວ ເຊິ່ງຕອນດິນທີ່ຈະອອກ ໃບຢັ້ງຢືນການພັດທະນາທີ່ດິນກະສິກຳມີເງື່ອນໄຂດັ່ງນີ້:

- ຕອນດິນທີ່ໄດ້ອອກໃບຢັ້ງຢືນການນຳໃຊ້ທີ່ດິນກະສິກຳ ແລະ ແຜນວາດເນື້ອທີ່ຕອນດິນກະສິກຳ ທີ່ໄດ້ພັດທະນາແລ້ວ ເຊິ່ງບໍ່ທັນໄດ້ອອກທະບຽນຕາດິນຖາວອນ.
- ສຳລັບຕອນດິນທີ່ໄດ້ອອກທະບຽນແລ້ວ ແຕ່ບໍ່ໄດ້ຜ່ານຂັ້ນຕອນການຄຸ້ມຄອງທີ່ດິນກະສິກຳ ແລະ ມີຈຳນວນຫຼາຍແມ່ນໃຫ້ຄົ້ນຄ້ວາແກ້ໄຂ ແລະ ປັບປຸງໃຫ້ຖືກຕ້ອງຕາມກົດໝາຍວ່າດ້ວຍທີ່ດິນ ແລະ ກົດໝາຍປ່າໄມ້.
- ດິນຕອນດັ່ງກ່າວຕ້ອງມີໃບຢັ້ງຢືນການກວດກາ ຈາກຄະນະກຳມະການ ຕາມຂໍ້ຕົກລົງສະບັບນີ້.

**ມາດຕາ 9. ເປົ້າໝາຍການ ນຳໃຊ້ທີ່ດິນກະສິກຳ**

ເປົ້າໝາຍການນຳໃຊ້ທີ່ດິນກະສິກຳ ແມ່ນເພື່ອນຳໃຊ້ເຂົ້າໃນກິດຈະການປູກຝັງ, ລ້ຽງສັດ ແລະ ການປະມົງ, ຊົນລະປະທານ ເພື່ອຄໍ້າປະກັນທາງດ້ານສະບຽງອາຫານໃຫ້ແກ່ສັງຄົມ, ເປັນວັດຖຸດິບປ້ອນໂຮງງານອຸດສາຫະກຳປຸງແຕ່ງ ລວມທັງເປັນສິນຄ້າຮັບໃຊ້ພາຍໃນ ແລະ ສົ່ງອອກຕ່າງປະເທດ.

ມາດຕາ 10. ການເສຍສິດນຳໃຊ້ທີ່ດິນກະສິກຳ.

1. ການນຳໃຊ້ທີ່ດິນກະສິກຳບໍ່ຖືກຕາມເປົ້າໝາຍ.
2. ການຈັບຈອງ ແລະ ຄອບຄອງທີ່ດິນກະສິກຳເກີນກວ່າແຮງງານ.
3. ບໍ່ເສຍພາສີທີ່ດິນຢ່າງຕໍ່ເນື່ອງສາມປີພາຍຫຼັງທີ່ໄດ້ມີການກ່າວເຕືອນແລ້ວ.
4. ຫຼັງຈາກອອກໃບຢັ້ງຢືນການນຳໃຊ້ທີ່ດິນກະສິກຳ ຄົບກຳນົດສາມປີ ຖ້າຫາກຕອນດິນດັ່ງກ່າວບໍ່ມີການພັດທະນາ, ບໍ່ນຳໃຊ້ເຂົ້າໃນການຜະລິດ ຫຼື ນຳໃຊ້ບໍ່ຖືກຕ້ອງຕາມເປົ້າໝາຍ ຫຼື ເຮັດໃຫ້ຄຸນນະພາບທີ່ດິນເຊື່ອມໂຊມ ແມ່ນຈະບໍ່ອອກໃບຢັ້ງຢືນພັດທະນາທີ່ດິນກະສິກຳໃຫ້ ແລະ ຈະຖືກພິຈາລະນາຖອນສິດນຳໃຊ້ທີ່ດິນກະສິກຳດັ່ງກ່າວ ໂດຍຄະນະກຳມະການຂັ້ນແຂວງ ແລະ ຂັ້ນເມືອງ (ໃນກໍລະນີຂາດແຮງງານຈະໄດ້ຮັບການພິຈາລະນາຕາມຄວາມເໝາະສົມ)
5. ຕອນດິນທີ່ນຳໃຊ້ນັ້ນ ນອນຢູ່ໃນເຂດຫວງຫ້າມຂອງສາມປະເພດປ່າ ແລະ ເຂດຫວງຫ້າມອື່ນໆທີ່ກຳນົດໄວ້ໃນກົດໝາຍປ່າໄມ້.

## ໝວດທີ 3
## ການກວດກາ ການນຳໃຊ້ທີ່ດິນກະສິກຳ.

ມາດຕາ 11. ການກວດກາ

ການກວດກາການນຳໃຊ້ທີ່ດິນກະສິກຳ ແມ່ນການກວດກາ ທີ່ດິນກະສິກຳທີ່ລັດໄດ້ມອບໃຫ້ຄອບຄົວຊາວກະສິກອນນຳໃຊ້ໃນໄລຍະຜ່ານມາ, ກວດກາການຈັບຈອງ - ຄອບຄອງທີ່ດິນກະສິກຳ ໂດຍບໍ່ໄດ້ຜ່ານການອານຸຍາດຈາກການຈັດຕັ້ງລັດ ພາຍຫຼັງກວດກາແລ້ວ ຕ້ອງໄດ້ສັງລວມກໍລະນີຕ່າງໆ ເພື່ອແກ້ໄຂ ແລະ ປັບປຸງໃຫ້ຖືກຕ້ອງຕາມລະບຽບກົດໝາຍ.

ການກວດກາການນຳໃຊ້ທີ່ດິນກະສິກຳເປັນພື້ນຖານໃຫ້ແກ່ ການອອກເອກະສານຢັ້ງຢືນການນຳໃຊ້ທີ່ດິນກະສິກຳຢ່າງຖືກຕ້ອງໃນອານາຄົດເຊັ່ນ: ການຂຶ້ນສຳມະໂນທີ່ດິນກະສິກຳ, ການອອກໃບຢັ້ງຢືນການນຳໃຊ້ທີ່ດິນກະສິກຳ ແລະ ການອອກໃບຢັ້ງຢືນການພັດທະນາທີ່ດິນກະສິກຳ.

ພະແນກກະສິກຳ ແລະ ປ່າໄມ້ແຂວງ ມີຄວາມຮັບຜິດຊອບໂດຍກົງ ແລະ ເປັນໃຈກາງປະສານສົມທົບກັບພາກສ່ວນທີ່ກ່ຽວຂ້ອງ ໃນການກວດກາ ແລະ ຄຸ້ມຄອງການນຳໃຊ້ທີ່ດິນກະສິກຳ ໃນທົ່ວແຂວງ, ພາຍໃຕ້ການຊີ້ນຳ ດ້ານວິຊາການຂອງກະຊວງກະສິກຳ ແລະ ປ່າໄມ້ ແລະ ພາຍໃຕ້ການຊີ້ນຳການບໍລິຫານຄຸ້ມຄອງຂອງຄະນະກຳມະການຂັ້ນແຂວງ.

ມາດຕາ 12. ຄະນະກຳມະການກວດກາການຄຸ້ມຄອງ ນຳໃຊ້ທີ່ດິນກະສິກຳຂັ້ນແຂວງ.

ເຈົ້າແຂວງ ແຕ່ງຕັ້ງຄະນະກຳມະການຂັ້ນແຂວງປະກອບມີ:

| | |
|---|---|
| 1. ທ່ານ ຮອງເຈົ້າແຂວງ | ເປັນຫົວໜ້າ. |
| 2. ທ່ານ ຫົວໜ້າພະແນກກະສິກຳ ແລະ ປ່າໄມ້ ແຂວງ | ເປັນຮອງ. |
| 3. ທ່ານ ຫົວໜ້າພະແນກຊັບພະຍາກອນທຳມະຊາດ ແລະ ສິ່ງແວດລ້ອມ | ເປັນຮອງ. |
| 4. ທ່ານ ຮອງເຈົ້າເມືອງ 11 ເມືອງ | ເປັນຄະນະ. |

5. ທ່ານ ຮອງພະແນກການເງິນ ເປັນຄະນະ.

6. ທ່ານ ຮອງພະແນກກວດກາລັດ ເປັນຄະນະ.

7. ທ່ານ ຮອງພະແນກ ຍຸຕິທຳ ເປັນຄະນະ.

8. ປະກອບມີກອງເລຂາ ແລະ ວິຊາການທີ່ກ່ຽວຂ້ອງຈຳນວນໜຶ່ງ.

ນອກຈາກນີ້ຍັງມີຄະນະກຳມະການກວດກາການຄຸ້ມຄອງ ນຳໃຊ້ທີ່ດິນກະສິກຳ, ຂັ້ນເມືອງ ແລະ ຂັ້ນບ້ານ ໂດຍແມ່ນເຈົ້າເມືອງເປັນຜູ້ແຕ່ງຕັ້ງ.

**ມາດຕາ 13. ສິດ, ໜ້າທີ່ ຂອງຄະນະກຳມະການກວດກາການຄຸ້ມຄອງ ນຳໃຊ້ທີ່ດິນກະສິກຳ.**

ຄະນະກວດກາ ປະຕິບັດສິດ ແລະ ໜ້າທີ່ຂອງຕົນຄື: ຕິດຕາມ, ກວດກາ ແລະ ປະເມີນຜົນ ແຕ່ລະກິດຈະການ ການນຳໃຊ້ທີ່ດິນ ໃນໄລຍະ 6 ເດືອນ ແລະ 1 ປີ ແລ້ວນຳເອົາຜົນການກວດກາ ແລະ ປະເມີນຜົນລາຍງານຕໍ່ກອງປະຊຸມອົງການປົກຄອງແຂວງ ແລະ ສະພາປະຊາຊົນຂັ້ນແຂວງ.

**1. ສິດ, ໜ້າທີ່ ຂອງຄະນະກຳມະການຂັ້ນແຂວງ, ເມືອງ.**

- ຊີ້ນຳ, ກວດກາຕິດຕາມ ແລະ ຊຸກຍູ້ການຈັດຕັ້ງປະຕິບັດການກວດກາ ໃນການຄຸ້ມຄອງ ແລະ ນຳໃຊ້ທີ່ດິນກະສິກຳ ຂອງແຕ່ລະພາກສ່ວນທີ່ກ່ຽວຂ້ອງໃຫ້ຖືກຕ້ອງຕາມພາລະບົດບາດຂອງຕົນ ແລະ ຖືກຕ້ອງຕາມລະບຽບກົດໝາຍ.
- ຊີ້ນຳການແກ້ໄຂກໍລະນີຕ່າງໆໃນການນຳໃຊ້ທີ່ດິນກະສິກຳບໍ່ຖືກຕ້ອງຕາມເປົ້າໝາຍ.
- ຈັດກອງປະຊຸມ ເພື່ອຄົ້ນຄ້ວາ ແລະ ແກ້ໄຂ ບັນຫາຕ່າງໆທີ່ເກີດຂຶ້ນ.
- ພິຈາລະນາ ແລະ ລົງລາຍເຊັນ ຕົກລົງຖອນສິດນຳໃຊ້ທີ່ດິນກະສິກຳ ຕາມການສະເໜີ ຂອງພະແນກກະສິກຳ ແລະ ປ່າໄມ້ແຂວງ ຫຼື ຫ້ອງການກະສິກຳ ແລະ ປ່າໄມ້ເມືອງ.

**2. ສິດ, ໜ້າທີ່ ຂອງພະແນກກະສິກຳ ແລະ ປ່າໄມ້ແຂວງ.**

- ເປັນເຈົ້າການປະສານສົມທົບກັບພາກສ່ວນທີ່ກ່ຽວຂ້ອງ ຂອງແຂວງ ແລະ ອົງການການປົກຄອງເມືອງ ໃນການຈັດຕັ້ງປະຕິບັດວຽກງານກວດກາ ການຄຸ້ມຄອງການນຳໃຊ້ທີ່ດິນກະສິກຳ ໃນຂອບເຂດ ທົ່ວແຂວງ.
- ເປັນເຈົ້າການຄົ້ນຄ້ວາດ້ານວິຊາການໃນການກວດກາການຄຸ້ມຄອງ, ນຳໃຊ້ທີ່ດິນກະສິກຳໃນລະດັບແຂວງ.
- ເຜີຍແຜ່ ແລະ ເຊື່ອມຊຶມນິຕິກຳຕ່າງໆ ທີ່ກ່ຽວຂ້ອງກັບວຽກງານກວດກາ ການຄຸ້ມຄອງ ນຳໃຊ້ທີ່ດິນກະສິກຳ ໃຫ້ພາກສ່ວນຕ່າງໆຂັ້ນແຂວງ ແລະ ເມືອງ.
- ສະເໜີຫາອົງການປົກຄອງແຂວງ, ເມືອງອອກຄຳສັ່ງໂຈະ ຫຼື ຍຸດເຊົາຊົ່ວຄາວ ກ່ຽວກັບການນຳໃຊ້ທີ່ດິນກະສິກຳບໍ່ຖືກຕ້ອງ.
- ໃຫ້ຄຳປຶກສາແກ່ຄະນະກຳມະການຂັ້ນເມືອງ ໃນການຖອນສິດນຳໃຊ້ທີ່ດິນກະສິກຳ ທີ່ນອນໃນເຂດຫວງຫ້າມຂອງສາມປະ ເພດປ່າ ແລະ ເຂດຫວງຫ້າມອື່ນໆທີ່ໄດ້ກຳນົດໄວ້ໃນກົດໝາຍວ່າດ້ວຍປ່າໄມ້.
- ອອກໃບຢັ້ງຢືນພັດທະນາທີ່ດິນກະສິກຳຕາມການສະເໜີ ຂອງຫ້ອງການກະສິກຳ ແລະ ປ່າໄມ້ເມືອງ.
- ອອກແຈ້ງການຕ່າງໆດ້ານວິຊາການ ກ່ຽວກັບການກວດກາ ການຄຸ້ມຄອງການນຳໃຊ້ທີ່ດິນກະສິກຳໃຫ້ຫ້ອງການກະສິກຳ ແລະ ປ່າໄມ້ເມືອງ.
- ປະຕິບັດສິດ ແລະ ໜ້າທີ່ອື່ນໆຕາມການມອບໝາຍ.

3. ສິດ, ໜ້າທີ່ ຂອງຫ້ອງການກະສິກຳ ແລະ ປ່າໄມ້ເມືອງ.

- ເປັນເຈົ້າການປະສານສົມທົບກັບພາກສ່ວນທີ່ກ່ຽວຂ້ອງຂອງເມືອງ ແລະ ອຳນາດການປົກຄອງບ້ານໃນການຈັດຕັ້ງປະຕິບັດວຽກງານກວດກາ ການຄຸ້ມຄອງການນຳໃຊ້ທີ່ດິນກະສິກຳໃນຂອບເຂດເມືອງຂອງຕົນ.
- ເປັນເຈົ້າການຄົ້ນຄວ້າທາງດ້ານວິຊາການ ໃນການກວດກາ ການຄຸ້ມຄອງການນຳໃຊ້ທີ່ດິນກະສິກຳໃນລະດັບເມືອງ.
- ເຜີຍແຜ່ ແລະ ເຊື່ອມຊຶມນິຕິກຳຕ່າງໆທີ່ກ່ຽວຂ້ອງ ກັບວຽກງານກວດກາ ການຄຸ້ມຄອງການນຳໃຊ້ທີ່ດິນກະສິກຳໃຫ້ພາກສ່ວນຕ່າງໆຂັ້ນເມືອງ ແລະ ບ້ານ.
- ພິຈາລະນາຖອນສິດນຳໃຊ້ທີ່ດິນກະສິກຳ ແລະ ນຳສະເໜີເຈົ້າເມືອງເຊັນຮັບຮອງ.
- ຂຶ້ນສຳມະໂນ ແລະ ອອກສິດນຳໃຊ້ທີ່ດິນກະສິກຳໃຫ້ຄອບຄົວ.
- ອອກແຈ້ງການຕ່າງໆດ້ານວິຊາການກ່ຽວກັບການກວດກາ ການຄຸ້ມຄອງການນຳໃຊ້ທີ່ດິນກະສິກຳໃຫ້ບ້ານ.
- ປະຕິບັດສິດ ແລະ ໜ້າທີ່ອື່ນໆຕາມການມອບໝາຍ.

4. ສິດ, ໜ້າທີ່ ຂອງອຳນາດການປົກຄອງບ້ານ.

- ເປັນເຈົ້າການປະສານສົມທົບກັບຫ້ອງການກະສິກຳ ແລະ ປ່າໄມ້ເມືອງ, ຄະນະຮັບຜິດຊອບກວດກາການຄຸ້ມຄອງນຳໃຊ້ທີ່ດິນກະສິກຳຂອງເມືອງ ແລະ ອຳນາດການປົກຄອງບ້ານທີ່ມີຊາຍແດນຕິດກັນໃນການຈັດຕັ້ງປະຕິບັດວຽກງານກວດກາ ການຄຸ້ມຄອງການນຳໃຊ້ທີ່ດິນກະສິກຳ.
- ສຶກສາອົບຮົມ ແລະ ເຜີຍແຜ່, ເຊື່ອມຊຶມ ນິຕິກຳຕ່າງໆທີ່ກ່ຽວຂ້ອງກັບວຽກງານກວດກາ ການຄຸ້ມຄອງການນຳໃຊ້ທີ່ດິນກະສິກຳ ໃຫ້ປະຊາຊົນພາຍໃນບ້ານຂອງຕົນ.
- ປະຕິບັດສິດ ແລະ ໜ້າທີ່ອື່ນໆຕາມການມອບໝາຍ.

## ໝວດທີ 4
## ການເກັບຄ່າບໍລິການ ຄຸ້ມຄອງທີ່ດິນກະສິກຳ

### ມາດຕາ 14. ການເກັບ ຄ່າບໍລິການວັດແທກ, ອອກໃບຢັ້ງຢືນຕ່າງໆ.

ການເກັບ ຄ່າບໍລິການວັດແທກ, ອອກໃບຢັ້ງຢືນທີ່ດິນກະສິກຳ ແມ່ນປະຕິບັດຕາມ ລັດຖະບັນຍັດປະທານປະເທດ ສະບັບເລກທີ 003/ປປທ, ລົງວັນທີ 26 ທັນວາ 2012 ວ່າດ້ວຍ ຄ່າທຳນຽມ ແລະ ຄ່າບໍລິການ, ມີລະບົບການຈົດຮັບ-ຈົດຈ່າຍ ທີ່ສາມາດກວດສອບໄດ້.

### ມາດຕາ 15. ການນຳໃຊ້ເງິນ ທີ່ໄດ້ມາຈາກການເກັບຄ່າບໍລິການ

ການນຳໃຊ້ເງິນທີ່ໄດ້ມາຈາກການເກັບຄ່າບໍລິການ ການຄຸ້ມຄອງ ແລະ ນຳໃຊ້ທີ່ດິນກະສິກຳ ແມ່ນປະຕິບັດຕາມ ລັດຖະບັນຍັດຂອງປະທານປະເທດ ສະບັບເລກທີ 003 /ປປທ, ລົງວັນທີ 26 ທັນວາ 2012 ວ່າດ້ວຍຄ່າທຳນຽມ ແລະ ຄ່າບໍລິການ ມາສ້າງເປັນກອງທຶນໝູນວຽນ.

ການນຳໃຊ້ເງິນກອງທຶນໝູນວຽນ ເຂົ້າໃນການຈັດຕັ້ງປະຕິບັດ ວຽກງານການກວດກາ ຄຸ້ມຄອງທີ່ດິນກະສິກຳ ຕ້ອງສ້າງເປັນແຜນການຈັດຕັ້ງປະຕິບັດ, ມີການສະຫຼຸບລາຍງານລາຍຮັບ-ລາຍຈ່າຍ ຖືກຕາມ, ກວດກາໄດ້ຮັບການຢັ້ງຢືນຈາກຄະນະກຳມະການຂັ້ນແຂວງ ແລະ ເມືອງ.

## ໝວດທີ 5
## ຂໍ້ຫ້າມ ແລະ ການແກ້ໄຂຂໍ້ຂັດແຍ່ງ

**ມາດຕາ 16. ຂໍ້ຫ້າມ**

1. ຫ້າມອອກໃບຢັ້ງຢືນການນຳໃຊ້ທີ່ດິນກະສິກຳເກີນແຮງງານໃນຄອບຄົວ, ເຂດຫວງຫ້າມຂອງສາມປະເພດປ່າ, ເຂດສະຫງວນແຄມນ້ຳ 50 ແມັດ ແລະ ເຂດຫວງຫ້າມອື່ນໆ.
2. ຫ້າມບຸກຄົນ, ນິຕິບຸກຄົນ ແລະ ການຈັດຕັ້ງ ຖົມດິນ, ຂຸດດິນກະສິກຳ ດ້ວຍຮູບການ ແລະ ວິທີການໃດກໍ່ຕາມທີ່ເຮັດໃຫ້ດິນມີການປ່ຽນແປງຈາກສະພາບເດີມໂດຍບໍ່ໄດ້ຮັບອານຸຍາດຈາກພະແນກກະສິກຳ ແລະ ປ່າໄມ້ແຂວງ.
3. ຫ້າມອອກໃບຕາດິນຖາວອນ ໃຫ້ແກ່ຕອນດິນກະສິກຳໃດໆ ທີ່ບໍ່ທັນໄດ້ອອກໃບຢັ້ງຢືນການພັດທະນາທີ່ດິນກະສິກຳ ຈາກພະແນກກະສິກຳ ແລະ ປ່າໄມ້ແຂວງ.
4. ຫ້າມອອກໃບຢັ້ງຢືນການນຳໃຊ້ທີ່ດິນກະສິກຳເຂດລຽບຊາຍແດນລະຫວ່າງຊາດ 2-5 ກິໂລແມັດ.
5. ຫ້າມໄຖດິນກະສິກຳທີ່ມີຄວາມຄ້ອຍຊັນຕັ້ງແຕ່ 32° ຂຶ້ນໄປຢ່າງເດັດຂາດ.
6. ຫ້າມເຈົ້າໜ້າທີ່ ແລະ ພະນັກງານສວຍໃຊ້ໜ້າທີ່ໃນການວັດແທກ, ຢັ້ງຢືນເອກະສານ, ເຊື່ອງອຳພັກຖານ, ຂໍ້ມູນຕ່າງໆ ກ່ຽວກັບທີ່ດິນກະສິກຳໂດຍບໍ່ຖືກຕ້ອງຕາມລະບຽບກົດໝາຍ.

**ມາດຕາ 17. ການແກ້ໄຂຂໍ້ຂັດແຍ່ງ.**

1. ການແກ້ໄຂກໍລະນີການນຳໃຊ້ທີ່ດິນກະສິກຳ, ການຈັບຈອງ ແລະ ຄອບຄອງທີ່ດິນກະສິກຳໂດຍບໍ່ໄດ້ຮັບອະນຸຍາດ, ນຳໃຊ້ບໍ່ຖືກເປົ້າໝາຍ, ບໍ່ນຳໃຊ້ທີ່ດິນພາຍຫຼັງທີ່ໄດ້ຮັບມອບເປັນເວລາ 3 ປີ, ການບໍ່ເສຍພາສີອາກອນ ຫຼື ຄ່າທຳນຽມ, ຄ່າບໍລິການທີ່ດິນກະສິກຳ ຕາມລະບຽບການທີ່ໄດ້ກຳນົດໄວ້ ແລະ ບັນຫາທີ່ດິນກະສິກຳອື່ນໆ ແມ່ນຄະນະກຳມະການຂັ້ນເມືອງປະສານສົມທົບກັບອົງການປົກຄອງບ້ານບ່ອນທີ່ດິນຕັ້ງຢູ່ເປັນຜູ້ແກ້ໄຂ.
2. ການແກ້ໄຂຂໍ້ຂັດແຍ່ງ: ແມ່ນອຳນາດການປົກຄອງບ້ານບ່ອນທີ່ດິນຕັ້ງຢູ່ ເປັນຜູ້ໄກ່ເກຍເສຍກ່ອນ ຖ້າຫາກບໍ່ສາມາດຕົກລົງກັນໄດ້ ກໍ່ສະເໜີໃຫ້ຄະນະກຳມະການຂັ້ນເມືອງ ເປັນຜູ້ໄກ່ເກ່ຍ ຖ້າຫາກຍັງບໍ່ສາມາດແກ້ໄຂໄດ້ ຄູ່ກໍລະນີມີສິດຮ້ອງຟ້ອງຕໍ່ສານ.

## ໝວດທີ 6
## ນະໂຍບາຍຕໍ່ຜູ້ມີຜົນງານ ແລະ ມາດຕະການຕໍ່ຜູ້ລະເມີດ

**ມາດຕາ 18. ນະໂຍບາຍຕໍ່ຜູ້ທີ່ມີຜົນງານ**

ບຸກຄົນ, ນິຕິບຸກຄົນ ຫຼື ການຈັດຕັ້ງ ທີ່ນຳໃຊ້ທີ່ດິນກະສິກຳທີ່ຖືກຕ້ອງຕາມລະບຽບກົດໝາຍ, ປົກປັກຮັກສາ ແລະ ພັດທະນາທີ່ດິນກະສິກຳຢ່າງມີປະສິດທິຜົນ ຈະໄດ້ຮັບການຍ້ອງຍໍ ແລະ ນະໂຍບາຍອື່ນໆຕາມຄວາມເໝາະສົມ.

**ມາດຕາ 19. ມາດຕະການຕໍ່ຜູ້ລະເມີດ.**

ບຸກຄົນ, ນິຕິບຸກຄົນ ຫຼື ການຈັດຕັ້ງ ທີ່ນໍາໃຊ້ທີ່ດິນກະສິກໍາ ທີ່ລະເມີດຂໍ້ຕົກລົງສະບັບນີ້ ຈະຖືກກ່າວເຕືອນ, ສຶກສາອົບຮົມ, ປັບໃໝ ຫຼື ລົງໂທດ ແລ້ວແຕ່ກໍລະນີເບົາ ຫຼື ໜັກ ພ້ອມທັງໃຊ້ແທນຄ່າເສຍຫາຍຕາມລະບຽບກົດໝາຍ.

## ໝວດທີ 7
## ບົດບັນຍັດສຸດທ້າຍ

**ມາດຕາ 20. ວ່າດ້ວຍການຈັດຕັ້ງປະຕິບັດ.**

ການຈັດຕັ້ງປະຕິບັດ ມອບໃຫ້ພະແນກກະສິກໍາ ແລະ ປ່າໄມ້ແຂວງ ເປັນເຈົ້າການເຜີຍແຜ່ໃຫ້ທົ່ວເຖິງ ແລະ ປະສານສົມທົບກັບພາກສ່ວນທີ່ກ່ຽວຂ້ອງ, ເມືອງ ແລະ ບ້ານໃນການຈັດຕັ້ງປະຕິບັດຂໍ້ຕົກລົງສະບັບນີ້ ຢ່າງເຂັ້ມງວດ.

**ມາດຕາ 21. ຜົນສັກສິດ**

ຂໍ້ຕົກລົງສະບັບນີ້ມີຜົນສັກສິດນັບແຕ່ມື້ລົງລາຍເຊັນເປັນຕົ້ນໄປ.

ເຈົ້າແຂວງ

ພົງສະຫວັນ ສິດທະວົງ